**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

----------ooo----------

ກະຊວງສຶກສາທິການ ແລະ ກິລາ

ກົມສ້າງຄູ

ວິທະຍາໄລຄູສະຫວັນນະເຂດ

ເລກທີ: 0839.........../ວຄສ/2021

ສະຫວັນນະເຂດ, ວັນທີ...17 SEP 2021..........

**ຂໍ້ຕົກລົງຂອງຜູ້ອຳນວຍການ**

**ວ່າດ້ວຍການອະນຸມັດນຳໃຊ້ວິໄສທັດຮອດປີ 2025**

**ແລະ ແຜນຍຸດທະສາດ 5 ປີ (2021-2025) ຂອງວິທະຍາໄລຄູສະຫວັນນະເຂດ**

**ເພື່ອສ້າງສູນແຫ່ງການພັດທະນາ ແລະ ສູນແຫ່ງຄວາມເປັນເລີດ**

**ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016- 2020)

**ອີງຕາມ:** ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 4507/ສສກ, ລົງວັນທີ 6 ກັນຍາ 2017 ວ່າດ້ວຍການແຕ່ງຕັ້ງກຳມະການຮັບຮອງວິຊາການການສ້າງສູນແຫ່ງການພັດທະນາ ແລະ ສູນແຫ່ງຄວາມເປັນເລີດສຳລັບສາຍສ້າງຄູ

**ອີງຕາມ:** ການຄົ້ນຄວ້າ ແລະ ຕົກລົງໃນກອງປະຊຸມທົບທວນວິໄສທັດວິທະຍາໄລຄູສະຫວັນນະເຂດ ຄັ້ງວັນທີ 29 ຕຸລາ 2020 ທີ່ພະແນກສຶກສາທິການ ແລະ ກິລາແຂວງຄຳມ່ວນ

**ອີງຕາມ:** ການຄົ້ນຄວ້າ ແລະ ຕົກລົງໃນກອງປະຊຸມທົບທວນວິໄສທັດວິທະຍາໄລຄູສະຫວັນນະເຂດ ຄັ້ງວັນທີ 5,13 ພະຈິກ 2020 ແລະ ຄັ້ງວັນທີ 4 ທັນວາ 2020 ທີ່ວິທະຍາໄລຄູສະຫວັນນະເຂດ

**ຜູ້ອຳນວຍການວິທະຍາໄລຄູສະຫວັນນະເຂດ ຈຶ່ງຕົກລົງ:**

**ມາດຕາ 1:** ອະນຸມັດນຳໃຊ້ວິໄສທັດຮອດປີ 2025 ແລະ ແຜນຍຸດທະສາດ 5 ປີ (2021-2025) ຂອງວິທະຍາໄລຄູສະຫວັນນະເຂດ

**ມາດຕາ 2**: ມອບໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຮູ້ທັງພ້ອມກັນຈັດຕັ້ງປະຕິບັດຕາມວິໄສທັດ ແລະ ແຜນຍຸດທະສາດດັ່ງກ່າວໃຫ້ປະກົດຜົນເປັນຈິງຕາມຄາດໝາຍທີ່ວາງໄວ້

**ມາດຕາ 3:** ຂໍ້ຕົກລົງສະບັບນີ້ມີຜົນນຳໃຊ້ໄດ້ນັບແຕ່ລົງລາຍເຊັນເປັນຕົ້ນໄປ.

**ຜູ້ອຳນວຍການ**

ກະຊວງສຶກສາທິການ ແລະ ກິລາ
ວິທະຍາໄລຄູ
ສະຫວັນນະເຂດ
ກົມສ້າງຄູ

ລັດສະໝີ ພະໄຊສີ

**ບ່ອນສົ່ງ**

| | |
|---|---|
| ຄະນະອຳນວຍການ | 4 ສະບັບ |
| ຫ້ອງການ | 10 ສະບັບ |
| ເກັບມ້ຽນ | 1 ສະບັບ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

ກົມສ້າງຄູ

ວິທະຍາໄລຄູສະຫັວນນະເຂດ

0841

ເລກທີ: ........../ວຄສ/2021

ສະຫວັນນະເຂດ, ວັນທີ......17 SEP 2021.....

# ວິໄສທັດຮອດປີ 2025 ແລະ ແຜນຍຸດທະສາດ 5 ປີ (2021-2025) ເພື່ອສ້າງສູນແຫ່ງການພັດທະນາ ແລະ ສູນແຫ່ງຄວາມເປັນເລີດ

- ອີງຕາມ: ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016- 2020)
- ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 4507/ສສກ, ລົງວັນທີ 6 ກັນຍາ 2017 ວ່າດ້ວຍການແຕ່ງຕັ້ງກຳມະການຮັບຮອງວິຊາການການສ້າງສູນແຫ່ງການພັດທະນາ ແລະ ສູນແຫ່ງຄວາມເປັນເລີດສຳລັບສາຍສ້າງຄູ
- ອີງຕາມ: ການຄົ້ນຄວ້າ ແລະ ຕົກລົງໃນກອງປະຊຸມທົບທວນວິໄສທັດວິທະຍາໄລຄູສະຫວັນນະເຂດ ຄັ້ງວັນທີ 29 ຕຸລາ 2020 ທີ່ພະແນກສຶກສາທິການ ແລະ ກິລາແຂວງຄຳມ່ວນ
- ອີງຕາມ: ການຄົ້ນຄວ້າ ແລະ ຕົກລົງໃນກອງປະຊຸມທົບທວນວິໄສທັດວິທະຍາໄລຄູສະຫວັນນະເຂດ ຄັ້ງວັນທີ 5,13 ພະຈິກ 2020 ແລະ ຄັ້ງວັນທີ 4 ທັນວາ 2020 ທີ່ວິທະຍາໄລຄູສະຫວັນນະເຂດ

**ຈຸດປະສົງ**

- ເພື່ອເປັນແນວທາງໃນການປະຕິບັດໃຫ້ ວິທະຍາໄລຄູສະຫວັນນະເຂດ ເປັນສູນແຫ່ງການພັດທະນາ ແລະ ສູນແຫ່ງຄວາມເປັນເລີດທາງດ້ານວິຊາການ

## I. ການວິເຄາະສະພາບລວມຂອງວິທະຍາໄລຄູສະຫວັນນະເຂດ ຕາມຮູບແບບຂອງ (SWOT Analysis)

### 1. ຈຸດແຂງ (S):

❖ **ການບໍລິຫານ**

- ມີຜູ້ບໍລິຫານທີ່ຮຽນຈົບບໍລິຫານການສຶກສາໃນລະດັບປະລິນຍາໂທ ແລະ ປະລິນຍາເອກ
- ການປະຕິບັດນະໂຍບາຍມີການລວມສູນ
- ມີສັກກາຍະພາບໃນການວາງແຜນ, ຄຸ້ມຄອງ ແລະ ພັດທະນາ

❖ **ບຸກຄະລາກອນ**

- ຄູປະຈຳການສຳລັບດຳເນີນການສອນສາຂາວິຊາ ພຽງພໍ (175 ຄົນ, ຍິງ 88 ຄົນ, ປະລິນຍາເອກ 2 ຄົນ, ຍິງ 1 ຄົນ, ປະລິນຍາໂທ 72 ຄົນ, ຍິງ 22 ຄົນ)

| ຕົວຊີ້ບອກ | ປັດຈຸບັນ | | | | ລວມ | ກຳລັງສຶກສາຕໍ່ | | ລວມ |
|---|---|---|---|---|---|---|---|---|
| | ຊັ້ນສູງ | ປຕ | ປທ | ປອ | | ປທ | ປອ | |
| ສາຍຄູຄະນິດສາດ | 0 | 10/7 | 13/3 | 0 | 23/10 | 4/3 | 2/0 | 6/3 |
| ສາຍຄູເຄມີສາດ | 0 | 4/2 | 6/3 | 0 | 10/5 | 2/1 | 1/1 | 3/2 |
| ສາຍຄູຟີສິກສາດ | 1 | 1/1 | 7/2 | 0 | 9/3 | 1/1 | 1/0 | 2/1 |
| ສາຍຄູຊີວະສາດ | 0 | 3/3 | 3/1 | 0 | 6/4 | 0 | 1/0 | 1/0 |
| ລວມ | 01 | 18/13 | 29/9 | 0 | 48/22 | 7/5 | 5/1 | 12/6 |
| ອັດຕາສ່ວນຮ້ອຍ | 2.08 | 37.5 | 60.42 | 0 | | 58.33 | 41.67 | 2.08 |

- ❖ **ພື້ນຖານໂຄງລ່າງ**
- ອາຄານສະຖານທີ່ປະກອບມີ: ອາຄານບໍລິຫານ 1 ຫຼັງ ມີ 9 ຫ້ອງ, ອາຄານອະເນກປະສົງ ມີ 2 ຫຼັງ, ອາຄານຮຽນ 9 ຫຼັງ ມີ 67 ຫ້ອງ, ອາຄານທີ່ພັກພະນັກງານຄູ-ອາຈານ 5 ຫຼັງ ມີ 32 ຫ້ອງ, ຫໍພັກນັກສຶກສາ 6 ຫຼັງ ມີ 78 ຫ້ອງ ແລະ ອາຄານຮັບແຂກ 1 ຫຼັງ ມີ 3 ຫ້ອງນອນ.
- ເດີ່ນກິລາ ປະກອບມີດັ່ງນີ້: ເດີ່ນບານເຕະ 1 ເດີ່ນ, ເດີ່ນກະຕໍ້ 2 ເດີ່ນ, ເດີ່ນກິລາຮົ່ມ 1 ເດີ່ນ, ເດີ່ນກິລາດອກປີກໄກ່ 1 ເດີ່ນ ແລະ ເດີ່ນກິລາເປຕັງ 3 ເດີ່ນ.
- ສູນເຝິກວິຊາຊີບ ປະກອບມີ: ສູນເຝິກການເສີມສວຍ, ສູນເຝິກຊ່າງໄມ້-ຊ່າງກໍ່, ສູນເຝິກການຕັດຫຍິບ, ສູນເຝິກການປຸງແຕ່ງ, ສູນເຝິກການປູກຝັງ ແລະ ຫ້ອງວາງສະແດງມູນເຊື້ອ.
- ສູນອໍານວຍຄວາມສະດວກພາຍໃນ ປະກອບມີ: ສູນອຸປະກອນການສຶກສາ 1 ຫຼັງ, ສູນອາຫານ 2 ຫຼັງ ແລະ ສະຖານທີ່ຈອດລົດນັກສຶກສາ ແລະ ຄູ-ອາຈານ 1 ແຫ່ງ.

❖ **ສິ່ງອໍານວຍຄວາມສະດວກ**

- ຫ້ອງທົດລອງ ແລະ ຫ້ອງເຝິກສອນ ປະກອບມີ: ຫ້ອງທົດລອງຟີຊິກສາດ 1 ຫ້ອງ, ຫ້ອງທົດລອງເຄມີສາດ 1 ຫ້ອງ, ຫ້ອງທົດລອງຊີວະສາດ 1 ຫ້ອງ, ຫ້ອງເພາະເນື້ອເຫຍື່ອ 1 ຫ້ອງ, ເຮືອນອະນຸບານເບ້ຍໄມ້ 1 ຫຼັງ, ຫ້ອງເຝິກສອນຕາມສາຂາວິຊາ 9 ຫ້ອງ, ຫ້ອງຟັງສຽງພາສາອັງກິດ 2 ຫ້ອງ , ຫ້ອງພູມສາດ 1 ຫ້ອງ, ຫ້ອງຮຽນຄອມພິວເຕີ 3 ຫ້ອງ, ຫ້ອງປະຊຸມ 4 ຫ້ອງ ແລະ ຫໍສະໝຸດ 1 ຫຼັງ.
- ມີອາຄານຮຽນ ແລະ ອຸປະກອນຮັບໃຊ້ໃນແຕ່ລະສາຂາວິຊາຢ່າງພຽງພໍ.
- ມີໂຮງຮຽນສາທິດ (ລ້ຽງເດັກ-ອະນຸບານ, ປະຖົມ ແລະ ມັດທະຍົມ) ແລະ ໂຮງຮຽນເຄືອຂ່າຍສໍາລັບເຝິກປະສົບການວິຊາຊີບຄູ.
- ມີລະບົບເຄືອຂ່າຍໂທລະສັບພາຍໃນ ແລະ ອິນເຕີເນັດທີ່ສາມາດຕິດຕໍ່ ແລະ ສະໜອງຂໍ້ມູນຂ່າວສານໄດ້ຢ່າງທົ່ວເຖິງໃນລະດັບດີ.

❖ **ດ້ານຫຼັກສູດ**

- ມີຫຼັກສູດການສ້າງຄູໃນທຸກໆສາຂາວິຊາ ລວມທັງສາຂາວິຊາທີ່ເປັນເປົ້າໝາຍພັດທະນາ.
- ມີປຶ້ມຄູ່ມື ແລະ ເອກະສານປະກອບການສອນຮັບໃຊ້ຫຼັກສູດທີ່ເປີດສອນ.
- ມີໜ່ວຍງານຄຸ້ມຄອງ, ທົບທວນ ແລະ ປັບປຸງຫຼັກສູດ ເພື່ອໃຫ້ສອດຄ່ອງກັບວິໄສທັດ.

❖ **ດ້ານການວິໄຈ ແລະ ຜົນງານວິຊາການ**

- ມີການສ້າງຕໍາລາ ແລະ ປຶ້ມຄູ່ມືການວິໄຈ
- ມີຂະບວນການເຝິກອົບຮົມໃຫ້ຄວາມຮູ້ດ້ານການວິໄຈ
- ມີການສົ່ງເສີມຂະບວນການການເຮັດວິໄຈ
- ມີການເຜີຍແຜ່ຜົນງານການວິໄຈ

2. **ຈຸດອ່ອນ (W):**

❖ **ການບໍລິຫານ**

- ຜູ້ບໍລິຫານລະດັບໜ່ວຍງານຈໍານວນໜຶ່ງມີປະສົບການດ້ານການບໍລິຫານຍັງບໍ່ຫຼາຍ
- ຜູ້ບໍລິຫານຈໍານວນໜຶ່ງຍັງຮັບຜິດຊອບຫຼາຍວຽກພ້ອມກັນ ເຊັ່ນ: ທັງເຮັດວຽກບໍລິຫານ ແລະ ວິຊາການທັງພາຍໃນ ແລະ ພາຍນອກ

❖ **ບຸກຄະລາກອນ**

- ວຸດທິການສຶກສາຂອງຄູ ຍັງບໍ່ທັນຕອບສະໜອງຕາມເງື່ອນໄຂຂອງການສ້າງເປັນ COD ແລະ COE
- ບາງສາຂາວິຊາທີ່ມີເງື່ອນໄຂໃນການສ້າງເປັນ COD ແລະ COE ແຕ່ບໍ່ຖືກເປັນເປົ້າໝາຍ

- ຄວາມສາມາດການໄປຍົກລະດັບປະລິນຍາໂທ ແລະ ປະລິນຍາເອກຂອງຄູ ຍັງມີຂີດຈາກັດດ້ານຄວາມຮູ້ ຄວາມສາມາດ ແລະ ແຫຼ່ງທຶນສະໜັບສະໜູນ
- ຄວາມຮູ້ ຄວາມສາມາດທາງດ້ານພາສາຕ່າງປະເທດ ແລະ IT ຂອງຄູສອນຈໍານວນໜຶ່ງຍັງຈໍາກັດ

❖ **ດ້ານພື້ນຖານໂຄງລ່າງ**

- ອາຄານຮຽນ ແລະ ຫໍພັກນັກສຶກສາຈໍານວນໜຶ່ງເກົ່າແກ່
- ເສັ້ນທາງພາຍໃນສະຖານການສຶກສາຍັງບໍ່ທັນໄດ້ມາດຕະຖານ ແລະ ໄຟສ່ອງສະຫວ່າງ ກໍຍັງບໍ່ທົ່ວເຖິງ

❖ **ສິ່ງອໍານວຍຄວາມສະດວກ**

- ແຫຼ່ງການຮຽນຮູ້ໃນຖານຂໍ້ມູນພາຍໃນ ແລະ ພາຍນອກຜ່ານລະບົບອິນເຕີເນັດ ຍັງຢູ່ໃນຂີດຈໍາກັດ
- ເອກະສານສໍາລັບການຄົ້ນຄວ້າບາງວິຊາໃນຫ້ອງສະໝຸດຍັງບໍ່ທັນຫຼາກຫຼາຍ
- ເອກະສານຄົ້ນຄວ້າທີ່ເປັນພາສາລາວ ຍັງບໍ່ທັນຫຼາກຫຼາຍ

❖ **ດ້ານການວິໄຈ ແລະ ການເຜີຍແຜ່ຜົນງານວິຊາການ**

- ຄູທີ່ມີຜົນງານການວິໄຈຈໍານວນໜຶ່ງບໍ່ສາມາດສະເໜີຜົນງານໃນລະດັບສາກົນໄດ້ ຍ້ອນຂາດຄວາມຮູ້ພາສາອັງກິດ
- ຍັງບໍ່ມີຖານຂໍ້ມູນວາລະສານບົດຄວາມການວິໄຈ

**3. ໂອກາດ (O):**

❖ **ດ້ານການບໍລິຫານ**

- ມີນິຕິກໍາດ້ານນະໂຍບາຍການພົວພັນຕ່າງປະເທດທີ່ເອື້ອອໍານວຍ
- ຫຼາຍສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດມີຄວາມສົນໃຈຮ່ວມມືດ້ານວິຊາການ
- ການປະຕິບັດນະໂຍບາຍໃຫ້ຄູທຸກຄົນເຮັດການວິໄຈພາກຮຽນລະບົດ

❖ **ດ້ານບຸກຄະລາກອນ**

- ໄດ້ຮັບການຊ່ວຍເຫຼືອຈາກສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດທີ່ມີ MOU ໃນການໃຫ້ທຶນການສຶກສາໃນລະດັບປະລິນຍາໂທ ແລະ ປະລິນຍາເອກ
- ພະນັກງານຈໍານວນໜຶ່ງມີຄວາມສາມາດໃນການຊອກຫາແຫຼ່ງທຶນໃນການຝຶກອົບຮົມ ແລະ ສຶກສາຕໍ່ ໂດຍຜ່ານສື່ຂອງສະຖາບັນການສຶກສາ ແລະ ອົງການຈັດຕັ້ງສາກົນ
- ພະນັກງານຄູ-ອາຈານມີຄວາມສາມາດເຂົ້າຮ່ວມສະເໜີຜົນງານທາງດ້ານການວິໄຈທັງພາຍໃນ ແລະ ລະດັບສາກົນ

❖ **ດ້ານພື້ນຖານໂຄງລ່າງ**

- ມີທີ່ຕັ້ງເໝາະສົມສໍາລັບຜູ້ຮຽນ (ຢູ່ອ້ອມຂ້າງມີສູນບໍລິການດ້ານແຫຼ່ງການຮຽນຮູ້ ແລະ ການບໍລິການຕ່າງໆ ເຊັ່ນ: ທະນາຄານ, ໄປສະນີ, ຄລີນິກ, ຕະຫຼາດ, ສະຖານທີ່ພັກເຊົາ)

❖ **ສິ່ງອໍານວຍຄວາມສະດວກ**

- ມີເສັ້ນທາງຍຸດທະສາດຕາມແລວເສດຖະກິດຕາເວັນອອກ-ຕາເວັນຕົກຜ່ານ ແລະ ສາມາດເຂົ້າເຖິງໄດ້ຢ່າງສະດວກສະບາຍ
- ມີສະຖານທີ່ເອື້ອອໍານວຍໃນການລົງເຝິກປະສົບການ ແລະ ເຝິກຫັດວິຊາຊີບຄູ
- ມີເງື່ອນໄຂໃນການເຊັນ MOU ຮ່ວມກັບຫຼາຍສະຖາບັນທັງພາຍໃນ ແລະ ຕ່າງປະເທດ

4. **ສິ່ງທ້າທາຍ (T) :**

❖ **ສະພາບສັງຄົມ**

- ສະພາບຄ່ານິຍົມຂອງສັງຄົມທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນ: ນິຍົມການຮຽນວິຊາກ່ຽວກັບການປົກຄອງເສດຖະກິດ...ຫຼາຍກວ່າຮຽນຄູ ເຮັດໃຫ້ມີແຕ່ນັກຮຽນລະດັບອ່ອນ-ປານກາງເຂົ້າຮຽນຄູ
- ນັກຮຽນທີ່ມາຮຽນຄູມີຄວາມຮູ້ພື້ນຖານສາຂາວິຊາຕ່າງໆຫຼຸດໂຕນກັນ
- ສະຖາບັນອື່ນຢູ່ໃນເຂດດຽວກັນທີ່ມີສະຖານະສູງກວ່າ ແຕ່ເຮັດໜ້າທີ່ສ້າງຄູເໝືອນກັນ

❖ **ດ້ານນະໂຍບາຍ**

- ການວາງມາດຕະຖານການຮັບນັກຮຽນເຂົ້າຮຽນຄູ ຍັງບໍ່ສອດຄ່ອງກັບສະພາບຄວາມເປັນຈິງຂອງສັງຄົມ ແລະ ເສດຖະກິດ
- ນະໂຍບາຍການສ້າງ COD & COE ພາໃຫ້ມີການຈຳກັດໃນການພັດທະນາສາຂາວິຊາອື່ນທີ່ມີຄວາມພ້ອມ
- ຕົວເລກບັນຈຸເຂົ້າເປັນລັດຖະກອນທົ່ວໄປໂດຍສະເພາະລັດຖະກອນຄູ ແຕ່ລະປີຍັງຈຳກັດ ພາໃຫ້ໂຮງຮຽນພາກລັດພາດໂອກາດໄດ້ຄົນທີ່ມີຜົນການຮຽນດີເຂົ້າບັນຈຸເປັນລັດຖະກອນຄູ

5. **ຕາຕາລາງສັງລວມຜົນການວິເຄາະ SWOT (Tows Matrix)**

| ປັດໄຈພາຍນອກ (External Factors) | |
|---|---|
| ໂອກາດ (Opportunities) | ສິ່ງທ້າທາຍ (Threats) |
| - ມີບຸກຄະລາກອນໃນລະດັບປະລິນຍາເອກ<br>- ມີການສ້າງຫຼັກສູດການສອນໃນລະບົບອອນລາຍ<br>- ຄຸນນະພາບໃນການຮຽນການສອນ<br>- ມີນິຕິກຳດ້ານນະໂຍບາຍການພົວພັນຕ່າງປະເທດທີ່ເອື້ອອຳນວຍການຮ່ວມມືດ້ານວິຊາການ, ການວິໄຈ ການແລກປ່ຽນທາງດ້ານວັດທະນະທຳ, ສິລະປະ ແລະ ກິລາ<br>- ບາງສາຂາວິຊາທີ່ມີເງື່ອນໄຂໃນການສ້າງເປັນ COD ແລະ COE ແລະ ມີການສ້າງຫຼັກສູດນຳໃຊ້ທີ່ແທດເໝາະກັບສະພາບຄວາມເປັນຈິງ (ຟີສິກສາດ, ພາສາອັງກິດ) | - ມີການຫຼຸດຜ່ອນງົບປະມານຂອງລັດ<br>- ມີການແຜ່ລະບາດຂອງພະຍາດ Covid-19<br>- ບາງສາຂາວິຊາທີ່ມີເງື່ອນໄຂໃນການສ້າງເປັນ COD ແລະ COE ແຕ່ບໍ່ຖືກເປັນເປົ້າໝາຍ (ຟີສິກສາດ, ພາສາອັງກິດ)<br>- ນັກຮຽນທີ່ມາຮຽນຄູມີຄວາມຮູ້ພື້ນຖານສາຂາວິຊາຕ່າງໆຫຼຸດໂຕນກັນ<br>- ສະຖາບັນອື່ນຢູ່ໃນເຂດດຽວກັນທີ່ມີສະຖານະສູງກວ່າທີ່ເຮັດໜ້າທີ່ສ້າງຄູເໝືອນກັນ<br>- ການຈຳກັດຈຳນວນນັກຮຽນມາຮຽນຄູ |
| ປັດໄຈພາຍໃນ (Internal Factors) | |
| ຈຸດແຂງ (Strengthens) | ຈຸດອ່ອນ (Weakness) |
| - ຜູ້ບໍລິຫານທີ່ຮຽນຈົບບໍລິຫານການສຶກສາໃນລະດັບປະລິນຍາໂທ ແລະ ແລະ ປະລິນຍາເອກ<br>- ການປະຕິບັດນະໂຍບາຍມີການລວມສູນ<br>- ມີສັກກາຍະພາບໃນການວາງແຜນ, ຄຸ້ມຄອງ ແລະ ພັດທະນາ<br>- ການປະຕິບັດນະໂຍບາຍໃຫ້ຄູທຸກຄົນເຮັດການວິໄຈພາກຮຽນລະບົດ<br>- ອັດຕາການຮຽນຈົບຂອງນັກສຶກສາ<br>- ມີການຮ່ວມມືຕ່າງໆກັບຫຼາຍພາກສ່ວນທັງພາກລັດ ແລະ ເອກະຊົນ | - ຜູ້ບໍລິຫານລະດັບໜ່ວຍງານຈຳນວນໜຶ່ງມີປະສົບການດ້ານການບໍລິຫານຍັງບໍ່ຫຼາຍ<br>- ຜູ້ບໍລິຫານຈຳນວນໜຶ່ງຍັງຮັບຜິດຊອບຫຼາຍວຽກພ້ອມກັນ ເຊັ່ນ: ທັງເຮັດວຽກບໍລິຫານ ແລະ ວິຊາການທັງພາຍໃນ ແລະ ພາຍນອກ<br>- ວຸດທິການສຶກສາຂອງຄູ ຍັງບໍ່ທັນຕອບສະໜອງຕາມເງື່ອນໄຂຂອງການສ້າງເປັນ COD ແລະ COE<br>- ການວາງແຜນຍົກລະດັບວຸດທິຄູຍັງບໍ່ທັນຊັດເຈນ |

| | |
|---|---|
| - ມີຄູເຝິກຫຼັກ ລະດັບຊາດ ແລະ ລະດັບແຂວງ | - ມີຄູເຝິກຫຼັກ ລະດັບຊາດ ແລະ ລະດັບແຂວງ ຫຼາຍທ່ານ ແຕ່ຄູພາຍໃນຈານວນໜຶ່ງຍັງບໍ່ໄດ້ຮັບການເຝິກ |

## II. ວິໄສທັດ ( Vision)

**ວິທະຍາໄລຄູສະຫວັນນະເຂດ ເປັນສູນກາງແຫ່ງການພັດທະນາວິຊາຊີບຄູທີ່ມີຄຸນນະພາບ ແລະ ຈັນຍາບັນ, ເອົາໃຈໃສ່ການວິໄຈ ສາມາດເຊື່ອມໂຍງໄດ້ກັບສາກົນ**

**Savannakhet Teacher Training College is the Centre of Professional Development with High Quality and Ethic Teachers, research-oriented, and international cooperation**

## III. ພາລະກິດ (Mission )

**ສ້າງວິທະຍາໄລຄູສະຫວັນນະເຂດ ໃຫ້ເປັນສະຖານການສຶກສາແຫ່ງການພັດທະນາຄູມືອາຊີບທີ່ມີຄຸນະພາບ ລະດັບຂົງເຂດ ແລະ ສາກົນ, ສາມາດຕອບສະໜອງຄູໃຫ້ໄດ້ຕາມຄວາມຕ້ອງການຂອງສັງຄົມຢ່າງຕໍ່ເນື່ອງ ເພື່ອປະກອບສ່ວນພັດທະນາການສຶກສາຂັ້ນສາມັນຂອງຊາດໃຫ້ມີຄຸນະພາບ.**

**Create Savannakhet Teacher Training College to be a professional development institution with high quality in nationally and internationally regions. In addition, we are able to produce teachers to constantly maintain the demands of society in order to collaborate the national education.**

## IV. ເປົ້າໝາຍ, ຈຸດປະສົງ ແລະ ກິດຈະກໍາ:

1. **ເປົ້າໝາຍ: ( G )**

- ສ້າງຄູທຸກສາຂາວິຊາໃຫ້ມີຄຸນະພາບ ແລະ ຈັນຍາບັນໃຫ້ເປັນທີ່ຍອມຮັບຂອງສັງຄົມ ໂດຍສະເພາະຄູຄະນິດສາດ ແລະ ຄູເຄມີສາດ
- ສົ່ງເສີມການຄົ້ນຄວ້າວິໄຈຂອງຄູ ແລະ ນັກສຶກສາ
- ສ້າງວິທະຍາໄລຄູສະຫວັນນະເຂດ ໃຫ້ສາມາດເຊື່ອມໂຍງກັບສາກົນ
- ສ້າງວິທະຍາໄລຄູ ສະຫວັນນະເຂດໃຫ້ເປັນສະຖານການສຶກສາຄູແຫ່ງຊາດ ໃນປີ 2022

2. **ຈຸດປະສົງ ແລະ ກິດຈະກໍາ: ການພັດທະນາຄູໃຫ້ມີຄຸນະພາບ ແລະ ຈັນຍາບັນ**

- **ຈຸດປະສົງ 1: ການພັດທະນາຫຼັກສູດ**
  - ❖ **ກິດຈະກໍາ**
    - ປັບປຸງຫຼັກສູດເດີມຕາມນະໂຍບາຍຂອງກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ
    - ພັດທະນາຫຼັກສູດໃນລາຍວິຊາໃຫ້ມີຄຸນະພາບ ແລະ ຕິດພັນກັບຈັນຍາບັນຄູ
    - ເຝິກອົບຮົມຄູໃນການນໍາໃຊ້ຫຼັກສູດລາຍວິຊາທີ່ພັດທະນາ
    - ປະເມີນຄຸນນະພາບຫຼັກສູດ
- **ຈຸດປະສົງ 2: ການພັດທະນາຄູຕາມນະໂຍບາຍຂອງກະຊວງສຶກສາທິການ ແລະ ກິລາ**
  - ❖ **ກິດຈະກໍາ**
    - ເຝິກອົບຮົມວິທີການສອນ, ພາສາຕ່າງປະເທດ, ພື້ນຖານວິຊາຊີບ, ການນໍາໃຊ້ IT ເຂົ້າໃນການສອນ ແລະ ການເຮັດການວິໄຈ
    - ການຍົກລະດັບວຸດທິການສຶກສາ ແລະ ພັດທະນາຄວາມຮູ້ວິຊາສະເພາະ ໂດຍສະເພາະສາຂາວິຊາທີ່ສ້າງເປັນ COD ແລະ COE
    - ໃຫ້ກຽດຕິຄຸນ, ບໍາເນັດ ແກ່ຄູ ແລະ ຜູ້ອາວຸໂສທີ່ມີຜົນງານທາງດ້ານວິຊາການ

- **ຈຸດປະສົງ 3: ການພັດທະນານັກສຶກສາຄູ**
  - ❖ **ກິດຈະກຳ**
  - ປະຖົມນິເທດວຽກງານວິຊາການ ແລະ ກິດຈະການນັກສຶກສາ
  - ຈັດກິດຈະກຳການຮຽນ-ການສອນໂດຍເນັ້ນຜູ້ຮຽນເປັນໃຈກາງ ແລະ ປະເມີນຜົນການຮຽນ ໃຫ້ຕິດພັນກັບ 3 ລັກສະນະ 5 ຫຼັກມູນການສຶກສາແຫ່ງຊາດ
  - ເຝິກອົບຮົມພື້ນຖານວິຊາຊີບເສີມຫຼັກສູດ ແລະ ຈັດກິດຈະກຳນອກຫຼັກສູດ
  - ສຶກສາອົບຮົມນັກສຶກສາຄູໃຫ້ມີຈັນຍາບັນ ແລະ ບຳລຸງການຮຽນຂອງນັກສຶກສາ
  - ເຝິກປະສົບການ, ເຝິກຫັດວິຊາຊີບ ແລະ ຂຽນບົດວິໄຈ-ບົດລາຍງານຈົບຊັ້ນ
  - ຕິດຕາມນັກສຶກສາໃນການປະກອບອາຊີບພາຍຫຼັງການຮຽນຈົບ
- **ຈຸດປະສົງ 4: ການພັດທະນາແຫຼ່ງການຮຽນຮູ້**
  - ❖ **ກິດຈະກຳ**
  - ສ້າງຖານຂໍ້ມູນສຳລັບວາລະສານ, ບົດຄວາມວິຊາການ ແລະ ບົດຄວາມວິໄຈ
  - ສ້າງຖານສືບຄົ້ນເອກະສານອອນໄລນ໌ (ສຳລັບຫໍສະໝຸດ)
  - ເພີ່ມງົບປະມານການຈັດຊື້ປື້ມຕຳລາ, ຄູ່ມື, ເອກະສານປະກອບການສອນ ແລະ ຄອມພິວເຕີ ເຂົ້າຫໍສະໝຸດ
  - ສ້າງ ແລະ ພັດທະນາ ປື້ມຕຳລາ, ຄູ່ມື, ເອກະສານປະກອບການສອນ
  - ເຝິກອົບຮົມວິຊາບັນນາລັກສາດ, ຫ້ອງທົດລອງ, ຫ້ອງປະຕິບັດການ, ຫ້ອງຝຶກສອນ ໃຫ້ຄູ ແລະ ນັກສຶກສາ
  - ນິເທດການເຂົ້າເຖິງແຫຼ່ງການຮຽນຮູ້ຜ່ານລະບົບອອນໄລນ໌ ໃຫ້ຄູ ແລະ ນັກສຶກສາ
- **ຈຸດປະສົງ 5: ການເຊື່ອມໂຍງກັບສາກົນ**
  - ❖ **ກິດຈະກຳ**
  - ການຮ່ວມມືທາງດ້ານວິຊາການ
  - ການຮ່ວມມືທາງດ້ານການວິໄຈ
  - ການຮ່ວມມືທາງດ້ານການແລກປ່ຽນວັດທະນະທຳ, ສິລະປະ ແລະ ກິລາ

3. **ສາຍວິຊາທີ່ເປັນເປົ້າໝາຍໃນການພັດທະນາເປັນ COD/COE**

ເປົ້າໝາຍສຳລັບການສ້າງເປັນສູນແຫ່ງການພັດທະນາ ແລະ ສູນແຫ່ງການເປັນເລີດ ມີ 2 ສາຂາວິຊາ ຄື:

- ສາຍຄູຄະນິດສາດ
- ສາຍຄູເຄມີສາດ

4. **ເປົ້າໝາຍໃນການກໍ່ສ້າງບຸກຄະລາກອນ**

| ຕົວຊີ້ບອກ | ຈຸດເລີ່ມຕົ້ນ | | ເປົ້າໝາຍ 3 ປີ | | ເປົ້າໝາຍ 5 ປີ | | ລວມຍອດ | |
|---|---|---|---|---|---|---|---|---|
| | ປທ | ປອ | ປທ | ປອ | ປທ | ປອ | ປທ | ປອ |
| **ສາຍຄູຄະນິດສາດ** | 23/10 | 0 | 4/3 | 2/0 | + 2 | + 1 | 29 | 3 |
| **ສາຍຄູເຄມີສາດ** | 10/5 | 0 | 2/1 | 1/1 | + 6 | + 1 | 18 | 2 |
| **ລວມ** | 33/15 | 0 | 6/4 | 3/1 | +8 | +2 | 47 | 5 |
| | ປັດຈຸບັນ | | 2023 | | 2025 | | | |




## 5. ແຜນຈັດຕັ້ງປະຕິບັດ ວິໄສທັດ ແລະ ຍຸດທະສາດ ແຕ່ປີ 2021 ຫາ 2025

| ລ/ດ | ຈຸດປະສົງ | ກິດຈະກໍາ | ຜູ້ຮັບຜິດຊອບ | ວັນເວລາ |
|---|---|---|---|---|
| 1 | ການພັດທະນາຫຼັກສູດ | ປັບປຸງຫຼັກສູດເດີມຕາມນະໂຍບາຍຂອງກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ | ຫ້ອງການສົ່ງເສີມວິຊາການ | 2021 |
| | | ພັດທະນາຫຼັກສູດໃນລາຍວິຊາໃຫ້ມີຄຸນະພາບ ແລະ ຕິດພັນກັບຈັນຍາບັນ | ຫ້ອງການສົ່ງເສີມວິຊາການ | 2021 |
| | | ເຝິກອົບຮົມຄູໃນການນໍາໃຊ້ຫຼັກສູດລາຍວິຊາທີ່ພັດທະນາ | ຫ້ອງການສົ່ງເສີມວິຊາການ | 2021 |
| | | ປະເມີນຄຸນນະພາບຫຼັກສູດ | ຫ້ອງການສົ່ງເສີມວິຊາການ | 2021<br>2022 |
| 2 | ການພັດທະນາຄູຕາມນະໂຍບາຍຂອງກະຊວງສຶກສາທິການ ແລະ ກິລາ | ເຝິກອົບຮົມວິທີການສອນ, ພາສາຕ່າງປະເທດ ພື້ນຖານວິຊາຊີບ, ການນໍາໃຊ້ IT ເຂົ້າໃນການສອນ ແລະ ການເຮັດການວິໄຈ | ຫ້ອງການສົ່ງເສີມວິຊາການ, ຫ້ອງ ການພັດທະນາຄູ ແລະ ຫ້ອງການວັດຜົນ-ປະເມີນຜົນ | ມັງກອນ 2021-2022 |
| | | ການຍົກລະດັບວຸດທິການສຶກສາ ແລະ ພັດທະນາຄວາມຮູ້ວິຊາສະເພາະ ໂດຍສະເພາະສາຂາວິຊາທີ່ສ້າງເປັນ COD ແລະ COE | ຫ້ອງການສົ່ງເສີມວິຊາການ ແລະ ຫ້ອງການຈັດຕັ້ງ-ພະນັກງານ | 2021-2022 |
| | | ໃຫ້ກຽດຕິຄຸນ, ບໍາເນັດ ແກ່ຄູ ແລະ ຜູ້ອາວຸໂສທີ່ມີຜົນງານທາງດ້ານວິຊາການ | ຫ້ອງການສົ່ງເສີມວິຊາການ ແລະ ຫ້ອງການຈັດຕັ້ງ-ພະນັກງານ | 2021-2022 |
| 3 | ການພັດທະນານັກສຶກສາຄູ | ປະຖົມນິເທດວຽກງານວິຊາການ ແລະ ກິດຈະການນັກສຶກສາ | ຫ້ອງການສົ່ງເສີມວິຊາການ ແລະ ກິດຈະການນັກສຶກສາ | ກຸມພາ 2022 |
| | | ຈັດກິດຈະກໍາການຮຽນ-ການສອນໂດຍເນັ້ນຜູ້ຮຽນເປັນໃຈກາງ ແລະ ປະເມີນຜົນການຮຽນໃຫ້ຕິດພັນກັບ 3 ລັກສະນະ 5 ຫຼັກມູນການສຶກສາແຫ່ງຊາດ | ຫ້ອງການສົ່ງເສີມວິຊາການ | 2021-2022 |
| | | ເຝິກອົບຮົມພື້ນຖານວິຊາຊີບເສີມຫຼັກສູດ ແລະ ຈັດກິດຈະກໍານອກຫຼັກສູດ | ຫ້ອງການກິດຈະການນັກສຶກສາ | |
| | | ສຶກສາອົບຮົມນັກສຶກສາຄູໃຫ້ມີຈັນຍາບັນ ແລະ ບໍາລຸງການຮຽນຂອງນັກສຶກສາ | ຫ້ອງການສົ່ງເສີມວິຊາການ | 2021-2022 |

| ລ/ດ | ຈຸດປະສົງ | ກິດຈະກຳ | ຜູ້ຮັບຜິດຊອບ | ວັນເວລາ |
|---|---|---|---|---|
| | | ເຝິກປະສົບການ, ເຝິກຫັດວິຊາຊີບ ແລະ ຂຽນບົດວິໄຈ-ບົດລາຍງານຈົບຊັ້ນ | ຫ້ອງການສົ່ງເສີມວິຊາການ ແລະ ຫ້ອງການສາຍ | ມິຖຸນາ - ກໍລະກົດ |
| | | ຕິດຕາມນັກສຶກສາໃນການປະກອບອາຊີບພາຍຫຼັງການຮຽນຈົບ | ຫ້ອງການສົ່ງເສີມວິຊາການ/ ວັດຜົນ-ປະເມີນຜົນ | ສິງຫາ 2021 |
| 4 | ການພັດທະນາແຫຼ່ງການຮຽນຮູ້ | ສ້າງຖານຂໍ້ມູນສຳລັບວາລະສານ, ບົດຄວາມວິຊາການ ແລະ ບົດຄວາມວິໄຈ | ຫ້ອງການວັດຜົນ-ປະເມີນຜົນ + ພັດທະນາຄູ | ກໍລະກົດ 2021 |
| | | ສ້າງຖານສືບຄົ້ນເອກະສານອອນໄລນ໌ (ສຳລັບຫໍສະໝຸດ) | ຫ້ອງການວັດຜົນ-ປະເມີນຜົນ+ ສົ່ງເສີມວິຊາການ | 2021 |
| | | ເພີ່ມງົບປະມານການຈັດຊື້ປຶ້ມຕຳລາ, ຄູ່ມື, ເອກະສານປະກອບການສອນ ແລະ ຄອມພິວເຕີ ເຂົ້າຫໍສະໝຸດ | ຫ້ອງການບໍລິຫານ,ຫ້ອງການສົ່ງເສີມວິຊາການ ແລະ ຫ້ອງການວັດຜົນ-ປະເມີນຜົນ | 2021-2022 |
| | | ສ້າງ ແລະ ພັດທະນາ ປຶ້ມຕຳລາ, ຄູ່ມື, ເອກະສານປະກອບການສອນ | ຫ້ອງການສົ່ງເສີມວິຊາການ/ ຫ້ອງການສາຍ | 2021-2022 |
| | | ເຝິກອົບຮົມວິຊາບັນນາຮັກສາດ, ຫ້ອງທົດລອງ, ຫ້ອງປະຕິບັດການ, ຫ້ອງຝຶກສອນ ໃຫ້ຄູ ແລະ ນັກສຶກສາ | ຫ້ອງການສົ່ງເສີມວິຊາການ ແລະຫ້ອງການພັດທະນາຄູ | 2021-2022 |
| | | ນິເທດການເຂົ້າເຖິງແຫຼ່ງການຮຽນຮູ້ຜ່ານລະບົບອອນໄລນ໌ ໃຫ້ຄູ ແລະ ນັກສຶກສາ | ຫ້ອງການສົ່ງເສີມວິຊາການ ແລະ ຫ້ອງການວັດຜົນ-ປະເມີນຜົນ | 2021-2022 |
| 5 | ການເຊື່ອມໂຍງກັບສາກົນ | ການຮ່ວມມືທາງດ້ານວິຊາການ | ຫ້ອງການວິຊາການ ແລະ ໜ່ວຍງານພົວພັນຕ່າງປະເທດ | 2021-2022 |
| | | ການຮ່ວມມືທາງດ້ານການວິໄຈ | ຫ້ອງການວິຊາການ,ຫ້ອງການພັດທະນາຄູແລະ ໜ່ວຍງານພົວພັນຕ່າງປະເທດ | 2021-2022 |
| | | ການຮ່ວມມືທາງດ້ານການແລກປ່ຽນວັດທະນະທຳ, ສິລະປະ ແລະ ກິລາ | ຫ້ອງການກິດຈະການນັກສຶກສາ ແລະ ໜ່ວຍງານພົວພັນຕ່າງປະເທດ | 2021-2022 |

ວິທະຍາໄລຄູສະຫວັນນະເຂດ, ວັນທີ 17 SEP 2021

ຜູ້ອຳນວຍການ

ລັດສະໝີ ພະໄຊສີ